ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

2795---

ເລກທີ.........../ຫອຄ.ກຂອ.ຄຄ

ນະຄອນຫຼວງວຽງຈັນ, ວັນທີ.....04 OCT 2013

## ແຈ້ງການ

ເຖິງ:
- ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ
- ທ່ານປະທານສະພາບໍລິຫານເຂດນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ
- ທ່ານປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ແລະ ຫ້ອງການສະພາການຄ້າ ແລະ ອຸດສາຫະກຳແຂວງ
- ຫົວໜ່ວຍທຸລະກິດສົ່ງອອກທີ່ນຳໃຊ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ

ເລື່ອງ: ການນຳໃຊ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຟອມ D ແລະ ຟອມ AK ສະບັບປັບປຸງໃໝ່

- ອີງຕາມການຕົກລົງເຫັນດີໃນກອງປະຊຸມອະນຸກຳມະການວ່າດ້ວຍແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າເສລີອາຊຽນ (Sub-Committee on ATIGA Rules of Origin: SC-AROO)
- ອີງຕາມການຕົກລົງເຫັນດີໃນກອງປະຊຸມອະນຸກຳມະການດ້ານອັດຕາພາສີ ແລະ ລະບຽບແຫຼ່ງກຳເນີດສິນຄ້າອາຊຽນ-ເກົາຫຼີ (ASEAN-Korea Sub-Committee on Tariffs and Rules of Origin: AKSTROO)

ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ນັບແຕ່ວັນທີ 1 ມັງກອນ 2014 ເປັນຕົ້ນໄປຈະໄດ້ເລີ່ມນຳໃຊ້ແບບຟອມ D (ພາຍໃຕ້ຂອບສັນຍາການຄ້າເສລີອາຊຽນ) ແລະ ຟອມ AK (ພາຍໃຕ້ຂອບສັນຍາການຄ້າເສລີອາຊຽນ-ເກົາຫຼີ) ສະບັບປັບປຸງໃໝ່ ຊຶ່ງມີການປັບປຸງເນື້ອໃນຫ້ອງທີ 9 ຂອງແບບຟອມ ດັ່ງລາຍລະອຽດລຸ່ມນີ້:

ສຳລັບຟອມ D ແມ່ນໄດ້ປ່ຽນຄຳເວົ້າຢູ່ໃນຫ້ອງທີ 9 ຈາກຄຳວ່າ "Gross weight or other quantity and value (FOB)" ມາເປັນ "Gross weight or other quantity and value (FOB) where RVC is applied"

ສຳລັບຟອມ AK ແມ່ນໄດ້ປັ່ງນຄຳເວົ້າຢູ່ໃນຫ້ອງທີ 9 ຈາກຄຳວ່າ "Gross weight or other quantity and value (FOB)" ມາເປັນ "Gross weight or other quantity and value (FOB only when RVC criterion is used)".

ສ່ວນຂໍ້ຄວາມອື່ນໆແມ່ນຍັງຄືເກົ່າ. ໝາຍວ່າ ຢູ່ໃນຫ້ອງທີ 9 ຂອງແບບຟອມສະບັບປັບປຸງໃໝ່ ແມ່ນຈະໃຫ້ລະບຸລາຄາ FOB ໃສ່ ແຕ່ສະເພາະກໍລະນີກຳນົດແຫຼ່ງກຳເນີດສິນຄ້າໂດຍນຳໃຊ້ເງື່ອນໄຂການສ້າງມູນຄ່າເພີ່ມ (RVC) ເທົ່ານັ້ນ, ສ່ວນການກຳນົດແຫຼ່ງກຳເນີດໂດຍການນຳໃຊ້ເງື່ອນໄຂການປ່ຽນແປງລະຫັດພາສີ (CTC), ຂະບວນການຜະລິດສະເພາະ (SP)ແລະ ຜະລິດຕະພັນພາຍໃນທັງໝົດ (WO) ແມ່ນບໍ່ໃຫ້ລະບຸລາຄາ FOB ໃສ່.

ກຳນົດເວລາການນຳໃຊ້: ແບບຟອມ D ແລະ ຟອມ AK ສະບັບປັບປຸງໃໝ່ແມ່ນເລີ່ມນຳໃຊ້ແຕ່ວັນທີ 1 ມັງກອນ 2014 ເປັນຕົ້ນໄປ. ສ່ວນແບບຟອມ D ແລະ ຟອມ AK ສະບັບເກົ່າແມ່ນຍັງສາມາດ ນຳໃຊ້ຄວບຄູ່ກັບແບບຟອມສະບັບໃໝ່ໄດ້ອີກ 6 ເດືອນ ຈົນຮອດວັນທີ 30 ມິຖຸນາ 2014. ຫຼັງຈາກນັ້ນ ຫຼື ເລີ່ມຈາກວັນທີ 1 ກໍລະກົດ 2014 ເປັນຕົ້ນໄປແມ່ນໃຫ້ນຳໃຊ້ແບບຟອມໃໝ່ຢ່າງດຽວເທົ່ານັ້ນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ກະກຽມຈັດຕັ້ງປະຕິບັດ. ຢູ່ໃນຊ່ວງນີ້ບໍ່ຄວນສັ່ງພິມ ຫຼື ຊື້ແບບຟອມ 2 ຊະນິດນີ້ເປັນຈຳນວນຫຼາຍ ເພື່ອຫຼີກລ້ຽງການນຳໃຊ້ບໍ່ໝົດ ເຮັດໃຫ້ສິ້ນເປືອງງົບປະມານໂດຍບໍ່ຈຳເປັນ.

ຫົວໜ້າຫ້ອງການ,

ບຸນຄອງ ໂສພາວັນດີ

ບ່ອນສົ່ງ:

- ກົມນະໂຍບາຍການຄ້າຕ່າງປະເທດ "ເພື່ອຊາບ"
- ກົມພາສີ, ກະຊວງການເງິນ "ເພື່ອຊາບ"

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 2794/ຫອຄ.ກຂອ.ຄຄ

04 OCT 2013

ນະຄອນຫຼວງວຽງຈັນ, ວັນທີ...........................

# ສະໂນດນຳສົ່ງ

ເຖິງ: ທ່ານ...........................................................................................................

ເອກະສານທີ່ສົ່ງມາພ້ອມນີ້ມີ:

| ລ/ດ | ເນື້ອໃນເອກະສານ | ຈຳນວນ | ໝາຍເຫດ |
|---|---|---|---|
| 01 | ແຈ້ງການ ກ່ຽວກັບການກະກຽມນຳໃຊ້ໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ຟອມ D ແລະ ຟອມ AK ສະບັບປັບປຸງ | 01 | ແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ກະກຽມຈັດຕັ້ງປະຕິບັດ |

ດ້ວຍຄວາມນັບຖື

ຫົວໜ້າຫ້ອງການ,

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ບຸນຖອງ ໂສພາວັນດີ